**<u>ແຜນການສອນ:</u>**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 01 ພຶສຈິກາ 2009 (11-01-2009)**

---

**<u>ດຳຣົງຊີວິດຢູ່ໃນຄວາມເຊື່ອ:</u>**

**<u>ຂໍ້ພຣະຄັມພີໃນບົດຮຽນ</u>**: (ຢາໂກໂບ 1:19-25; 2:14, 18-26)

**<u>ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:</u>** ບົດຮຽນນີ້ກ່ຽວກັບຄວາມສັມພັນຣະຫວ່າງຄວາມເຊື່ອ ແລະການເຊື່ອຟັງ. ທີ່ເປັນພື້ນຖານໃນການກວດສອບທີ່ຍອມຮັບຊຶ່ງກັນແລະກັນຂອງຄຣິສຕຽນ.

**<u>ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ?:</u>** ມີຄຣິສຕຽນຫລາຍຄົນທີ່ບໍ່ຍອມໃຫ້ຄວາມເຊື່ອຂອງເຂົາເຈົ້າເຂົ້າສນິດໃນພຣະຄຣິດ ໃນການໃຊ້ຊີວິດຂອງເຂົາເຈົ້າ. ເຂົາເຈົ້າຍັງແບ່ງແຍກຊີວິດຂອງເຂົາເຈົ້າອອກ ແລະກໍຍັງບໍ່ພົວພັນກັບກຸ່ມຄຣິສຕຽນທີ່ຍຶດໝັ້ນໃນພຣະຄຳຂອງພຣະເຈົ້າຊຶ່ງສອດຄ້ອງກັນກັບພຣະທັມຢາໂກໂບ, ຢ່າງໃດກໍຕາມ, ຄວາມເຊື່ອທີ່ແທ້ຈິງກໍເຕັມໄປດ້ວຍຄວາມເຕັມໃຈ.

**<u>ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:</u>**
ບົດຮຽນນີ້ຈະຊ່ອຍໃຫ້ທ່ານເຂົ້າໃຈວ່າການອົດທົນຮັກສາຄວາມເຊື່ອ ຊຶ່ງເປັນຜົນສະທ້ອນທີ່ດີແກ່ການດຳຣົງຊີວິດທີ່ຍອມເຊື່ອຟັງ ແລະຢັ້ງຢືນວ່າທ່ານໄດ້ພິສູດໃຫ້ເຫັນຄວາມເຊື່ອຂອງທ່ານໂດຍທາງການດຳຣົງຊີວິດປະຈຳວັນຂອງທ່ານ.

**<u>ການຈັດຕຽມ ແລະແຜນການສອນຂອງຄຣູ:</u>**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລຶ້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**<u>ແນະນຳ</u>**: . ຄວາມສັມພັນຣະຫວ່າງການເຊື່ອຟັງກັບການເຮັດຕາມນັ້ນຄືແນວໃດ?

- ຖ້າການເຊື່ອຟັງ ແລະການທຳຕາມໄດ້ກ່ຽວຂ້ອງກັນ, ການດຳຣົງຊີວິດຄຣິສຕຽນຄວນໃຫ້ມີສິ່ງນີ້ເປັນພາກສ່ວນໃນການດຳເນີນຊີວິດຄຣິສຕຽນ. ຖາມວ່າ: ຫລັກຖານພຍານອັນໃດແດ່ທີ່ທ່ານເຫັນໃນຊີວິດຂອງບັນດາຜູ້ທີ່ທັງຫລາຍແນວໃດແດ່ທີ່ເຂົາເຈົ້າໄດ້ເປັນພາກສ່ວນຂອງໂລກ? ແມ່ນຫຍັງທີ່ແຍກເຂົາເຈົ້າອອກຈາກບັນດາຄົນທີ່ບໍ່ເຊື່ອ?
- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມຂອງພຣະເຢຊູໃນພຣະທັມ ໂຢຮັນ14:15,23-24. ພຣະເຢຊູຊົງກ່າວດັ່ງນີ້ ພຣະອົງ ແລະການເຊື່ອຟັງຂອງພຣະອົງໄດ້ດຳເນີນຄວບຄູ່ກັນໄປ.

1. **<u>ຍອມຮັບເອົາພຣະຄຳທີ່ປູກຝັງໄວ້:</u>** (ຢາໂກໂບ 1:19-21)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ເພງສັຣເສີນ ຢາໂກໂບ 1:19-21
- ຂີດຫ້ອງສາມຫ້ອງໃສ່ກະດານ ແລະຂຽນຄຳສາມຄຳນີ້ໃສ່ຫ້ອງແຕ່ລະຄຳຕາມລຳດັບ:
  ຫ້ອງທີນຶ່ງ "ວ່ອງໄວ" ຫ້ອງທີສອງ "ຊ້າ" ຫ້ອງທີສາມ "ເພາະເຫດໃດ". ໃຫ້ນັກຮຽນກວາດເບິ່ງພຣະທັມ ຢາໂກໂບ 1:19-21 ແລະຂຽນສິ່ງໃດທີ່ຢູ່ໃນຫ້ອງໃດກໍຂຽນລົງຫ້ອງນັ້ນ.
- ບອກໃຫ້ນັກຮຽນຄິດຫາສິ່ງອື່ນໆໃນໂລກສມັຍນີ້ທີ່ຄຣິສຕຽນສົມຄວນເຮັດໃຫ້ໄວ, ເຮັດໃຫ້ຊ້າ, ແລະເພາະເຫດໃດ.
- ເປັນເພາະເຫດໃດຄວາມໃຈຮ້າຍຈຶ່ງເປັນອຸປສັກຕໍ່ການຮັບເມັດພຣະທັມ?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (ຢາໂກໂບ 1:19-21)

1. ທ່ານຢາໂກໂບຂຽນຈົດໝາຍສບັບນີ້ສົ່ງເຖິງໃຜ?
2. ແມ່ນຫຍັງທີ່ເປັນສິ່ງປ້ອງກັນບໍ່ໃຫ້ຄົນເປັນຜູ້ທີ່ວ່ອງໄວໃນການຟັງພຣະຄຳຂອງພຣະເຈົ້າ?
3. ເຮັດແນວໃດຜູ້ທີ່ເຊື່ອຈຶ່ງຈະມີຄວາມຜູກພັນກັບພຣະທັມຂອງພຣະເຈົ້າໄດ້?
4. ບັນດາຜູ້ທີ່ເຊື່ອຄວນມີນິສັຍໃຈຄໍແນວໃດເພື່ອໃຫ້ສົມກັບເປັນຜູ້ທີ່ໄດ້ຮັບພຣະຄຳຂອງພຣະເຈົ້າ?
5. ທ່ານຄິດວ່າຄຣິສຕຽນມີແນວໂນ້ມທີ່ດີທີ່ຈະປ້ອງກັນ, ການຂັດເຄືອງໃຈ ຫລື ປະຕິເສດພຣະຄຳຂອງພຣະເຈົ້າທີ່ນຳພາຊີວິດຢູ່ບໍ່?
6. ຄວາມສັມພັນກັບພຣະເຈົ້າຂອງພວກເຮົາກັບຄົນອື່ນໆ ມີຜົນກະທົບຕໍ່ຄວາມສັມພັນກັບພຣະເຈົ້າຂອງພວກເຮົາແນວໃດ?

2. **<u>ການຂັບຕາມພຣະທັມ:</u>** (ຢາໂກໂບ 1:22-25)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ຢາໂກໂບ 1:22-25
- ໃຫ້ຂຽນຄຳວ່າ ຫລອກລວງຕົນເອງ ໃສ່ກະດານ ແລະຖາມນັກຮຽນວ່າ: ພວກເຮົາຫລອກລວງພວກເຮົາເອງແນວໃດແດ່?
- ໃຫ້ຈົດຈໍ່ໃນຄຳວ່າ ດີເລີດທີ່ສຸດ ແລະເສຣີພາບ. ແລ້ວໃຫ້ເຂົາເຈົ້າຍົກເຣື່ອງຂອງຄົນທີ່ເປັນລຸ້ນດຽວກັນມາເປັນຄຳອະທິບາຍໃຫ້ມີຄວາມໝາຍໃນການນຳມາໃຊ້ຈັກນຶ່ງຫລືສອງຢ່າງ.
- ເປີດໂອກາດໃຫ້ນັກຮຽນໃຫ້ຕົວຢ່າງພຣະທັມທີ່ດີທີ່ສຸດ ແລະສິດເສຣີພາບທີ່ເຂົາເຂົ້າໄດ້ນຳມາໃຊ້ໃນຊີວິດ.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** ຢາໂກໂບ 1:22-25

1. ບັນດາຜູ້ທີ່ເຊື່ອໄດ້ເຮັດແນວໃດຕໍ່ພຣະທັມຂອງພຣະເຈົ້າ?
2. ບາງສິ່ງບາງຢ່າງທີ່ພວກເຮົາຕ້ອງທຳສຳລັບພວກເຮົາເອງທີ່ພວກເຮົາລືມເຮັດນັ້ນແມ່ນຫຍັງ?
3. ພຣະບັນຍັດຂອງພຣະເຈົ້າໃດ້ໃຫ້ພວກເຮົາມີສິດເສຣີພາບແນວໃດ?
4. ພວກເຮົາຈະເຮັດແນວໃດເພື່ອບໍ່ໃຫ້ລືມພຣະຄຳຂອງພຣະເຈົ້າ?
5. ການອວຍພອນປະເພດໃດທີ່ ຜູ້ທີ່ກະທຳຕາມພຣະຄຳຂອງພຣະເຈົ້າໄດ້ຮັບ?

3 . **<u>ຄວາມເຊື່ອທີ່ຖືກຕ້ອງ:</u>** (ຢາໂກໂບ 2:14,18-26)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ຢາໂກໂບ 2:14,18-26 ແລະ ໂຣມ3:28.
- ໃຫ້ນັກຮຽນເປີດພຣະຄັມພີ ເອເຟໂຊ 2:8-10. ພຣະທັມເຫລົ່ານີ້ກ່ຽວພັນຫຍັງກັບສິ່ງທີ່ ທ່ານໂປໂລເວົ້າໃນພຣະທັມໂຣມກັບພຣະທັມຢາໂກໂບ?
- ໃຫ້ຊັ່ງຊາ ແລະປຽບທຽບເບິ່ງວ່າແມ່ນຫຍັງທີ່ໂປໂລກັບແມ່ນຫຍັງທີ່ຢາໂກໂບຂຽນ.
- ພຣະທັມເຫລົ່ານີ້ໄດ້ເວົ້າເຖິງຫລັກຖານແຫ່ງຄວາມເຊື່ອທີ່ເຮັດໃຫ້ມີຢູ່ໃນຊີວິດຂອງຜູ້ທີ່ເຊື່ອທັງຫລາຍ. ຫລາຍເທື່ອພວກເຮົາໄດ້ຄິດເຣື່ອງຄວາມແຕກຕ່າງໃນການປາກົດຂອງພຣະເຈົ້າທີ່ເຮັດໃຫ້ພວກເຮົາໄດ້ຮັບ ບັນດາຜູ້ທີ່ເຊື່ອມີຄວາມຮູ້ສຶກວ່າພຣະອົງຊົງສະຖິດຢູ່ນຳ, ໄດ້ຮັບການອວຍພອນຈາກພຣະອົງ, ມີພຣະວິນຍານບໍຣິສຸດຊົງນຳພາ, ຮູ້ວ່າໄດ້ເວົ້າກັບພຣະອົງໃນການອະທິຖານ, ແລະມີຄວາມຫວັງໄດ້ຂຶ້ນສວັນໃນເວລາຕາຍໄປ. ຢ່າງໃດກໍຕາມ, ຢາໂກໂບບໍ່ໄດ້ເວົ້າເຣື່ອງຜົນປໂຍດຂອງຜູ້ທີ່ເຊື່ອທີ່ໄດ້ຮັບແຕ່ມີການແຕກຕ່າງກັບພຶດຕິກັມຂອງຜູ້ທີ່ເຊື່ອ.
- ຂໍໃຫ້ຂຽນລັກສະນະທ່າທີຂອງຜູ້ທີ່ຕິດຕາມພຣະຄຣິດທີ່ມີໃນຊີວິດປະຈຳວັນ.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** ຢາໂກໂບ 2:14,18-26

1. ແມ່ນຫຍັງທີ່ເປັນຄວາມສັມພັນຣະຫວ່າງຄວາມເຊື່ອກັບການງານ?
2. ຂ້າພະເຈົ້າຈະສະແດງໃຫ້ທ່ານເຫັນຄວາມເຊື່ອຂອງຂ້າພະເຈົ້າໂດຍການເຮັດງານຂອງຂ້າພະເຈົ້ານັ້ນໝາຍຄວາມວ່າແນວໃດ?
3. ເປັນຫຍັງຢາໂກໂບຈຶ່ງເວົ້າວ່າຄວາມຈິງການເຊື່ອວ່າມີພຣະເຈົ້າພຽງອົງດຽວນັ້ນບໍ່ພໍ?
4. ເພາະເຫດໃດອັບຣາຮາມ ແລະຣາຫັບຈຶ່ງເປັນຕົວຢ່າງຂອງຄົນທີ່ດຳເນີນຊີວິດທີ່ປາສຈາກຄວາມເຊື່ອຂອງເຂົາ?
5. ໃນຊີວິດຂອງທ່ານແມ່ນໃຜເປັນຕົວຢ່າງທີ່ດີທີ່ສະແດງໃຫ້ໂລກເຫັນຄວາມເຊື່ອໂດຍການເຮັດງານຂອງເຂົາ?

## <u>ພຣະຄັມພີແຫ່ງຄວາມຈິງ</u>

- ຂໍໃຫ້ພວກເຮົາເປີດເຜີຍທຸກຈຸດຂອງການດຳຣົງຊີວິຂອງພວກເຮົາໃຫ້ເຫັນຣິດອຳນາດແຫ່ງພຣະທັມຂອງພຣະເຈົ້າ.
- ພວກເຮົາສາມາດໃຊ້ເວລາກັບພຣະຄຳຂອງພຣະເຈົ້າໃຫ້ເປັນຫລັກເປັນຖານ ແລະນຳເອົາສິ່ງທີ່ພຣະເຈົ້າບໍ່ຊົງພໍພຣະທັຍນັ້ນອອກຈາກການດຳເນີນຊີວິດຂອງພວກເຮົາໃຫ້ໄດ້.
- ພວກເຮົາຕ້ອງພິຈາຣະນາເຖິງອິດທິພົນຂອງພຣະຄັມພີຂອງພວກເຮົາໃນເວລາຮຽນແລະໃນເວລາປະຕິບັດ
- ໃຫ້ພວກເຮົາພິສູດເບິ່ງຄວາມເຊື່ອຂອງພວກເຮົາຜ່ານທາງການກະທຳທີ່ຮັບໃຊ້ຊຶ່ງກັນແລະກັນໂດຍຄວາມຮັກ.

**ອຸປຖັມໂດຍ ລາວຊາວເທັນບັບຕິສສັມພັນ www.lsbf.org by JH**